ບົດຄຳເຫັນ

ຂອງ ທ່ານ ສາດສະດາຈານ ດຣ. ບໍ່ແສງຄຳ ວົງດາລາ, ລັດຖະມົນຕີຊ່ວຍວ່າການກະຊວງຖະແຫລງຂ່າວ ແລະ ວັດທະນະທຳ, ປະທານສະມາຄົມລາວ-ໄທ ເພື່ອມິດຕະພາບ ກ່າວໃນພິທີເປີດງານສະຫລອງ 450 ປີ ພະທາດສີສອງຮັກ, ວັນທີ 14 ພຶດສະພາ 2011 ທີ່ ພະທາດສີສອງຮັກ, ຈັງຫວັດເລີຍ, ປະເທດໄທ.

****************************

**ນ້ອມນະມັດສະການພະເຖລະນຸເຖລະ,**

**ຮຽນ: - ທ່ານ ດຣ. ວິລະພົງ ຣາມາງກູນ,** ນາຍົກສະມາຄົມໄທ-ລາວເພື່ອມິດຕະພາບ

**- ທ່ານ ພອນສັກ ເຈັງລະໄນ,** ຜູ້ວ່າຣາຊະການຈັດຫວັດເລີຍ,

**- ທ່ານຍິງ ແລະ ທ່ານຊາຍ** ຜູ້ມີກຽດທັງຫຼາຍ,

ຂ້າພະເຈົ້າ ມີຄວາມພາກພູມໃຈ ແລະ ຮູ້ສຶກເປັນກຽດຢ່າງສູງ ທີ່ໄດ້ຮັບການເຊີນຈາກ ສະມາຄົມ ໄທ-ລາວ ເພື່ອມິດຕະພາບ ມາຮ່ວມພິທີເປີດງານນະມັດສະການ ພະທາດ ສີສອງຮັກ ໃນມື້ນີ້, ຊຶ່ງພະທາດ ດັ່ງກ່າວ ເປັນປູຊະນິຍະຖານ ທີ່ມີຄວາມໝາຍສຳຄັນທາງ ປະຫວັດສາດ ແຫ່ງການພົວພັນລາວ-ໄທ ມາແຕ່ບູຮານນະການ.

ມື້ນີ້ ຖືວ່າເປັນນິມິດໝາຍອັນປະເສີດ ທີ່ສອງສະມາຄົມພວກເຮົາ ໄດ້ມີໂອກາດມາ ທຳບຸນຮ່ວມກັນອີກຄັ້ງ. ຜ່ານມາສະມາຄົມລາວ-ໄທ ເພື່ອມິດຕະພາບ ກໍໄດ້ຮ່ວມກັບ ສະມາຄົມໄທ-ລາວເພື່ອມິດຕະພາບ ໄປຖວາຍກັນຖິນພະຣາຊະທານ ຂອງພະເຈົ້າມະຫາ ຊີວິດ ແຫ່ງຣາຊະອານາຈັກໄທ ຫລາຍໆຄັ້ງ ທີ່ ສປປ ລາວ ຂອງພວກຂ້າພະເຈົ້າ. ເຊິ່ງປີ ຜ່ານມາ ກໍໄດ້ໄປຖວາຍ ທີ່ວັດພົມສີລາ ບ້ານນາເຊັງ ແຂວງສະຫວັນ ນະເຂດ ສປປ ລາວ. ມື້ນີ້ສອງສະມາຄົມພວກເຮົາ ກໍໄດ້ມານະມັດສະການພະທາດສີສອງຮັກຮ່ວມກັນຢູ່ທີ່ນີ້.

ບັນດາທ່ານຜູ້ມີກຽດ,

ກ່ອນໜ້ານີ້ 450 ປີ ຄືໃນປີ ພ.ສ 2103-2106 ຫລື ຄ.ສ 1557-1560 ພະເຈົ້າໄຊຍະເສດຖາທິລາດ ແຫ່ງ ກຸງສີສັດຕະນາຄະນະຫຸດ ແລະ ສົມເດັດພະເຈົ້າມະຫາ ຊີວິດ ແຫ່ງ ກຸງສີອາຍຸທະຍາ ໄດ້ຮ່ວມກັນສ້າງ ພະທາດສີສອງຮັກ ນີ້ ເປັນຫລັກກັ້ນແດນ ໃນສະໄໝນັ້ນ ອັນໄດ້ສະແດງໃຫ້ເຫັນເຖິງຄວາມເປັນມິດໄມຕີ ທີ່ສະນິດແໜ້ນຕໍ່ກັນ ແລະ ເປັນສິ່ງສັກສິດຍຶດແໜ້ນຈິດໃຈ ເປັນບ້ານໃກ້ເຮືອນຄຽງທີ່ດີ ລະຫວ່າງປະຊາຊົນຂອງ ກຸງສີສັດຕະນາຄະນະຫຸດ ແລະ ກຸງສີອາຍຸທະຍາ.

ງານມະໂຫລານສະການພະທາດສີສອງຮັກໃນມື້ນີ້ ຍິ່ງມີຄວາມໝາຍສຳຄັນຂຶ້ນຕື່ມອີກ ເພາະ ໄດ້ຈັດຂຶ້ນ ໃນທ່າມກາງບັນຍາກາດ ທີ່ປະຊາຊົນລາວ ຫາກໍໄດ້ພາກັນສະເຫລີມ ສະຫລອງ 450 ປີ ນະຄອນຫລວງ ວຽງຈັນ ແລະ ໃນໂອກາດ ທີ່ປະຊາຊົນສອງປະເທດລາວ ແລະ ໄທ ກຳລັງສືບຕໍ່ສະເຫລີມສະຫລອງ 60 ປີ ແຫ່ງການສ້າງຕັ້ງສາຍພົວພັນການທູດ ລະຫວ່າງ ສປປ ລາວ ແລະ ຣາຊະອານາຈັກໄທ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ຄວາມປາຖະໜາ ອັນແຮງກ້າຂອງ ບັນພະບູລຸດລາວ ແລະ ໄທ ທີ່ມີຮ່ວມກັນມາໄດ້ 450 ປີແລ້ວນັ້ນ ກໍຄື ຄວາມມຸ້ງມາດປາຖະໜາ ທີ່ຢາກຢູ່ຮ່ວມກັນໂດຍສັນຕິ, ເປັນເພື່ອນບ້ານທີ່ດີຊຶ່ງກັນແລະກັນ ແລະ ຮ່ວມມືກັນແບບສະເໝີພາບ ຕ່າງຝ່າຍຕ່າງໄດ້ຮັບຜົນປະໂຫຍດ ລະຫວ່າງ ປະຊາຊົນສອງປະເທດລາວ ແລະ ໄທ ໃນປະຈຸບັນນີ້ ຈົ່ງໝັ້ນຄົງຂະໜົງແກ່ນ, ຍືນຍົງ ຄົງຕົວຢູ່ຄູ່ພະທາດສີສອງຮັກນີ້ຕະຫລອດກາລະນານ.

ໃນໂອກາດນີ້ ເພື່ອເປັນການສົ່ງເສີມການພົວພັນລາວ-ໄທ ໃຫ້ຂະຫຍາຍຕົວຢ່າງດີງາມ ຍິ່ງຂຶ້ນ ແລະ ທັງເປັນການແລກປ່ຽນທາງດ້ານວັດທະນະທຳ ລະຫວ່າງ ປະຊາຊົນສອງຊາດ ພວກເຮົາ ທັງເປັນການສ້າງຄວາມເບີກບານມ່ວນຊື່ນໃນງານມະໂຫລານສະການພະທາດສີສອງ ຮັກ, ໃນມື້ນີ້ ພວກຂ້າພະເຈົ້າ ໄດ້ນຳເອົາຄະນະສິນລະປະວັນນະຄະດີ ແລະ ກາຍະສິນ ຈາກ ສປປ ລາວ ມາຮ່ວມສະແດງໃຫ້ປະຊາຊົນໄທ ໂດຍສະເພາະ ປະຊາຊົນຊາວຈັງຫວັດເລີຍ ໄດ້ຮັບຊົມ.

ຂໍອວຍພອນໃຫ້ສາຍພົວພັນມິດຕະພາບລາວ-ໄທ ຈົ່ງໝັ້ນຍືນ ແລະ ຂໍໃຫ້ທ່ານ ຜູ້ມີກຽດ, ປວງຊົນຊາວໄທ ແລະ ລາວ ທີ່ມາຮ່ວມງານໃນມື້ນີ້ ຈົ່ງມີຄວາມຜາສຸກ, ສຸຂະພາບ ເຂັ້ມແຂງ ແລະ ຮ່ວມກັນ ສະຫລອງງານບຸນມື້ນີ້ ດ້ວຍຄວາມເບີກບານ ແລະ ມ່ວນຊື່ນ.

(ຂໍຂອບໃຈ)